ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ອົງການຈັດຕັ້ງມະຫາຊົນ ທຫລ ມອບເຄື່ອງຊ່ວຍເຫຼືອຊາວບ້ານອອມ




ອົງການຈັດຕັ້ງມະຫາຊົນ ທະນາຄານແຫ່ງ ສປປ ລາວ ໄດ້ມອບເຄື່ອງຊ່ວຍເຫຼືອແກ່ປະຊາຊົນບ້ານ ອອມ ເມືອງ ອະນຸວົງ ແຂວງ ໄຊສົມບູນ ໃນວັນທີ 11 ມີນາ 2021 ທີ່ຫ້ອງການບ້ານດັ່ງກ່າວຊຶ່ງເຄື່ອງທີ່ນຳໄປຊ່ວຍເຫຼືອຄັ້ງນີ້ປະກອບດ້ວຍເຄື່ອງນຸ່ງຫົ່ມ, ປຶ້ມແບບຮຽນ, ອຸປະກອນເຄື່ອງກິລາ ແລະ ອາຫານສຳເລັດຮູບຈຳນວນໜຶ່ງ ມູນຄ່າທັງໝົດ 23 ລ້ານກວ່າກີບ ໂດຍແມ່ນທ່ານ ສຸກັນ ຈັນທະວົງ ຮອງຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ ເປັນຜູ້ມອບ ແລະ ຕາງໜ້າປະຊາຊົນແມ່ນທ່ານນາງ ປ່າກູ້ຊົງ ຮອງນາຍບ້ານອອມເປັນຜູ້ຮັບ ໂດຍຊ້ອງໜ້າທ່ານ ເລັ່ງທ່າວ ຕົ່ງປາວ ພະນັກງານຮາກຖານຈາກຫ້ອງວ່າການສູນກາງພັກທີ່ປະຈຳການຢູ່ບ້ານອອມ; ພ້ອມນີ້, ກໍ່ມີພະນັກງານຈາກ 3 ອົງການຈັດຕັ້ງມະຫາຊົນ ທຫລ ແລະ ອຳນາດການປົກຄອງຂອງບ້ານດັ່ງກ່າວເຂົ້າຮ່ວມ.

ທ່ານ ເລັ່ງທ່າວ ຕົ່ງປາວ ໄດ້ກ່າວວ່າ: ເພື່ອເຮັດໃຫ້ບັນດານະໂຍບາຍຂອງຂັ້ນເທິງໂດຍສະເພາະການຈັດຕັ້ງປະຕິບັດດຳລັດ 414/ລບ ໃຫ້ປາກົດຜົນເປັນຈິງ, ການນຳຂອງແຂວງ-ຂອງເມືອງໄດ້ເລືອກເອົາບ້ານອອມເປັນບ້ານທົດລອງໃນການຈັດຕັ້ງປະຕິບັດສ້າງໃຫ້ກາຍເປັນບ້ານກະສິກອນທັນສະໄໝ, ເຂັ້ມແຂງທາງດ້ານການເງິນ (ກອງທຶນບ້ານ) ຕິດພັນກັບວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ດ້ານວັດທະນະທຳ-ສັງຄົມ ແລະ ອື່ນໆ, ໃນບາດກ້າວທຳອິດໄດ້ເລີ່ມຈາກບັນດາຄອບຄົວທີ່ມີທ່າແຮງເພື່ອໃຫ້ກາຍເປັນຕົວແບບໂດຍອາໄສປະຊາຊົນສອນປະຊາຊົນເອງ.

ບ້ານອອມມີເນື້ອທີ່ທັງໝົດ 751,98 ເຮັກຕາ, ມີປະຊາກອນ 2.746 ຄົນ, ຍິງ 1.329 ຄົນ, ມີ 384 ຄອບຄົວ, ມີແຮງງານຕົ້ນຕໍ 1.024 ຄົນເທົ່າກັບ 66.66%, ມີເນື້ອທີ່ນາທັງໝົດ 279,05 ເຮັກຕາ, ເນື້ອທີ່ສວນ 85 ເຮັກຕາ, ເນື້ອທີ່ປຸກສ້າງ 21 ເຮັກຕາ, ເນື້ອທີ່ລ້ຽງສັດ 170 ເຮັກຕາ, ເນື້ອທີ່ປ່າສະຫງວນ 88,93 ເຮັກຕາ, ເນື້ອທີ່ດິນປ່າຊົມໃຊ້ 50 ເຮັກຕາ, ປ່າປ້ອງກັນ 15 ເຮັກຕາ... ປະຈຸບັນນີ້ບ້ານອອມໄດ້ຮັບການຊຸກຍູ້ສົ່ງເສີມຈາກພາກລັດ-ພາກເອກະຊົນ ແລະ ຜູ້ປະກອບການທີ່ພັດທະນາຢ່າງເປັນຈຸດສຸມພໍສົມຄວນຊຶ່ງໃນນີ້ຄະນະຮັບຜິດຊອບຊີ້ນຳການພັດທະນາເຂດຈຸດສຸມໃຈກາງ ແລະ ຄະນະນັກວິທະຍາສາດຊ່ວຍວຽກຂອງຄະນະຮັບຜິດຊອບຊີ້ນຳການພັດທະນາເຂດຈຸດສຸມໃຈກາງແຂວງໄຊສົມບູນໄດ້ສຸມໃສ່ຝຶກອົບຮົມພື້ນຖານຄວາມຮູ້ດ້ານເຕັກນິກທາງດ້ານວິຊາການໃຫ້ແກ່ຊາວກະສິກອນ (ປະຊາຊົນກຸ່ມ-ປູກກຸ່ມລ້ຽງ), ຄວາມຮູ້ພື້ນຖານການເຂົ້າເຖິງແຫຼ່ງຂໍ້ມູນຂ່າວສານ ແລະ ວຽກງານການເງິນຂັ້ນບ້ານ, ໄດ້ສ້າງສູນຝຶກອົບຮົມໃຫ້ຄວາມຮູ້ໃຫ້ປະຊາຊົນຫຼືເອີ້ນວ່າໂຮງຮຽນປະຊາຊົນ.

ພ້ອມດຽວກັນນັ້ນ, ກໍ່ມີພາກສ່ວນນັກທຸລະກິດ, ນັກລົງທຶນ ແລະ ຜູ້ປະກອບການໄດ້ສຸມໃສ່ການລົງທຶນທີ່ມີສ່ວນຮ່ວມກັບປະຊາຊົນທີ່ໄດ້ເອົາງົວມາໃຫ້ປະຊາຊົນລ້ຽງ, ສົ່ງເສີມການປູກມັນສະຫຼູ ແລະ ອື່ນໆ; ພິເສດໃນວັນທີ 2 ກຸມພາ 2021 ທະນາຄານແຫ່ງ ສປປ ລາວ ຮ່ວມກັບກອງທຶນພັດທະນາໄຊສົມບູນ ກໍ່ໄດ້ມີພິທີເປີດບໍລິການກອງທຶນບ້ານອອມຢ່າງເປັນທາງການ ທັງນີ້ກໍ່ເພື່ອສະໜອງທຶນຮອນໃຫ້ຊາວບ້ານໄດ້ມີແຫຼ່ງທຶນນຳໃຊ້ເຂົ້າໃນການຜະລິດ, ການລ້ຽງ-ການປູກ, ການບໍລິການ...ປະກອບສ່ວນເຂົ້າໃນການພັດທະນາຄອບຄົວກໍ່ຄືພັດທະນາບ້ານໃຫ້ມີຄວາມຈະເລີນຢ່າງບໍ່ຢຸດຢັ້ງ.

# ຂ່າວ-ພາບ: ຣັດສະໝີ ດວງສັດຈະ

**ແລກປ່ຽນເງິນຕາຊະຊາຍ ຜິດລະບຽບກົດໝາຍບ້ານເມືອງ**